# ຣິດອຳນາດຈາກການຄືນພຣະຊົນຂອງພຣະເຢຊູ



ບົດຮຽນທີ 8 ສຳລັບສະບາໂຕທີ 22 ສິງຫາ 2026


“ຖ້າພຣະຄຣິດບໍ່ຄືນພຣະຊົນແລ້ວ ການປະກາດຂອງພວກເຮົາກໍ່ບໍ່ມີປະໂຫຍດ. . . .ແລະ
ຖ້າພຣະຄຣິດບໍ່ໄດ້ເປັນຄືນມາ ຄວາມເຊື່ອຂອງພວກເຈົ້າກໍ່ໄຮ້ປະໂຫຍດ ແລະ ພວກເຈົ້າກໍຍັງຈົມຢູ່
ໃນການບາບຂອງພວກຕົນ!” (1 ກຣທ 15:14–17)



ຕາມປັດຊະຍາກຣີກ—ອີງຕາມທິດສະດີຂອງທ່ານ ພລາໂຕນິກ Platonic—ຮ່າງກາຍ, ເຊິ່ງໂດຍແທ້ແມ່ນຊົ່ວຮ້າຍ, ເປັນພຽງຄຸກຂອງວິນຍານອຳມະຕະ. ໂດຍຄວາມຄິດເຊັ່ນນີ້, ແລ້ວການຟື້ນຄືນຊີບຂອງຮ່າງກາຍມີຄວາມໝາຍແນວໃດຕໍ່ຊາວກຣີກ ຫລື ຊາວໂຣມມັນ?

ດ້ວຍເຫດຜົນນີ້, ກຸ່ມໜຶ່ງໃນຄຣິດຕະຈັກໂກຣິນຈຶ່ງໄດ້ປະຕິເສດການມີຢູ່ຂອງການຟື້ນຄືນຊີບ. ອຈ ໂປໂລ ກ່າວເຖິງປະເດັນນີ້ໃນບົດທີ 15 ຂອງຈົດໝາຍສະບັບທຳອິດເຖິງຊາວໂກຣິນໂທ.



ນີ້ບໍ່ແມ່ນເລື່ອງເລັກນ້ອຍ. ການຟື້ນຄືນຊີບມີຄວາມເຊື່ອມໂຍງຢ່າງໃກ້ຊິດກັບຄວາມລອດ. ຖ້າວ່າບໍ່ມີການຟື້ນຄືນຊີບແລ້ວ... ການປະກາດຂ່າວປະເສີດນັ້ນ ຈະມີປະໂຫຍດຫຍັງ?

## ການຟື້ນພຣະຊົນຂອງພຣະຄຣິດ

ການຟື້ນຄືນພຣະຊົນເປັນເຫດການທາງປະຫວັດສາດຫລືບໍ່?
(1 ກຣທ 15:1-11)

## ຜົນຕາມມາຈາກການຟື້ນພຣະຊົນຂອງພຣະຄຣິດ

ຈະເກີດຫຍັງຂຶ້ນຖ້າພຣະຄຣິດບໍ່ໄດ້ຟື້ນຄືນມາຈາກຄວາມຕາຍ?
(1 ກຣທ 15:12-19)

ແມ່ນຫຍັງເປັນສິ່ງຢືນຢັນການຟື້ນພຣະຊົນ?
(1 ກຣທ 15:20-34)

## ການຟື້ນຄືນມາຂອງພວກເຮົາ

ພວກເຮົາຈະຟື້ນຄືນມາໃນຮ່າງກາຍແບບໃດ?
(1 ກຣທ 15:35-49)

ພວກເຮົາຈະຟື້ນຄືນມາຕອນໃດ?
(1 ກຣທ 15:50-58)

# ການຟື້ນຄືນພຣະຊົນ ຂອງພຣະເຢຊູ



# ການຟື້ນຄືນພຣະຊົນຂອງພຣະເຢຊູ ເປັນເຫດການທາງປະຫວັດສາດຫລືບໍ່?

"ເລື່ອງທີ່ເຮົາໄດ້ຮັບໄວ້ແລ້ວນັ້ນ ເຮົາໄດ້ມອບໄວ້ແກ່ເຈົ້າທັງຫລາຍເປັນເລື່ອງສຳຄັນທີ່ສຸດຄືວ່າ, ພຣະຄຣິດຊົງສິ້ນພຣະຊົນແທນຄວາມຜິດບາບຂອງເຮົາທັງຫລາຍ ຕາມທີ່ມີຂຽນໄວ້ໃນພຣະຄຳພີ, ແລະພຣະອົງໄດ້ຖືກຝັງໄວ້ ແລະໃນວັນຖ້ວນສາມ ໄດ້ຖືກຊົງບັນດານໃຫ້ເປັນຄືນມາສູ່ຊີວິດ ຕາມທີ່ມີຄຳຂຽນໄວ້ໃນພຣະຄຳພີ;"
1 ໂກຣິນໂທ 15:3-4

ກ່ອນທີ່ຈະກ່າວເຖິງຂໍ້ສົງໄສທີ່ຊາວໂກຣິນໂທມີກ່ຽວກັບການຟື້ນຄືນພຣະຊົນ, ອຈ ໂປໂລ ເຕືອນພວກເຂົາເຖິງວິທີເຮັດວຽກຂອງຂ່າວປະເສີດ (1 ກຣທ 15:1-2):

ມີການປະກາດ → ໄດ້ຮັບການຍອມຮັບ → ຍືນຍັດໃນນັ້ນ → ໄດ້ຮັບຄວາມລອດ

ແລ້ວຂ່າວປະເສີດທີ່ປະກາດນັ້ນແມ່ນຫຍັງ? (1 ກຣທ 15:3-4)

ພຣະເຢຊູຕາຍເພື່ອບາບພວກເຮົາ → ພຣະເຢຊູຊົງຖືກຝັງ → ພຣະອົງຟື້ນຄືນໃນວັນທີສາມ

ແລ້ວພວກເຮົາຈະຮູ້ໄດ້ແນວໃດວ່າມັນແມ່ນເຫດການໃນປະຫວັດສາດ? ໃຜເຫັນຕອນທີ່ພຣະອົງຊົງຟື້ນພຣະຊົນ? (1 ກຣທ 15:5-8)

ເປໂຕ ແລະ ທັງສາວົກ 12 ຄົນ → ພີ່ນ້ອງຫລາຍກວ່າ 500 ຄົນ → ຢາໂກໂບ ແລະ ອັກຄະສາວົກ → ອຈ ໂປໂລ "ຜູ້ເກີດແທ້ງ"

ອຈ ໂປໂລ ສະແດງໃຫ້ເຫັນຢ່າງຊັດເຈນແລ້ວວ່າ ເປັນວຽກງານຂອງພຣະເຈົ້າທີ່ສຳເລັດ "ອີງຕາມພຣະຄຳພີ" ແນ່ນອນ, ມັນເປັນແຜນການຂອງພຣະເຈົ້າທີ່ກຳນົດໄວ້ລ່ວງໜ້າ. ມີໃຜມີຂໍ້ສົງໄສບໍ່? ຂໍໃຫ້ໄປຖາມພະຍານທີ່ຍັງມີຊີວິດຢູ່ໃນເວລານັ້ນ! ແລະ ເລົ່າຕໍ່ກັນມາເລື້ອຍໆ







# ຜົນທີ່ຕາມມາຈາກ
# ການຟື້ນພຣະຊົນ
# ຂອງພຣະຄຣິດ







# ແມ່ນຫຍັງຈະເກີດຂຶ້ນ ຖ້າວ່າພຣະເຈົ້າບໍ່ໄດ້ຟື້ນຄືນມາຈາກຄວາມຕາຍ?

“ແລະພຣະອົງໄດ້ຖືກຝັງໄວ້ ແລະໃນວັນຖ້ວນສາມ ໄດ້ຖືກຊົງບັນດານໃຫ້ເປັນຄືນມາສູ່ຊີວິດ ຕາມທີ່ມີຄຳຂຽນໄວ້ໃນພຣະຄຳພີ;”
1 ໂກຣິນໂທ 15:4



ການປະຕິເສດການເປັນໄປໄດ້ຂອງການຟື້ນພຣະຊົນ ສ້າງຄວາມບໍ່ໝັ້ນຄົງໃຫ້ກັບຄວາມເຊື່ອຂອງຄຣິສຕຽນ, ເພາະວ່າ “ຖ້າບໍ່ມີການເປັນຄືນມາຈາກຕາຍ ພຣະຄຣິດກໍບໍ່ໄດ້ຖືກຊົງບັນດານໃຫ້ຄືນມາ” (1 ກຣທ 15:12-13). ແລະຖ້າວ່າພຣະອົງບໍ່ຟື້ນຄືນມາ...

- ການປະກາດຂ່າວປະເສີດນັ້ນ ໄຮ້ປະໂຫຍດ (1 ກຣທ 15:14a)
- ຄວາມເຊື່ອຂອງພວກເຮົາອະນິຈັງ ໄຮ້ປະໂຫຍດ (1 ກຣທ 15:14b) ບໍ່ມີປະໂຫຍດ (1 ກຣທ 15:17a)
- ພວກເຮົາເປັນພະຍານທີ່ບໍ່ຈິງ (1 ກຣທ 15:15)
- ພວກເຮົາຍັງຄົງຢູ່ໃນບາບຂອງພວກເຮົາ (1 ກຣທ 15:17b)
- ຜູ້ທີ່ຕາຍໄປນັ້ນ ຈະບໍ່ໄດ້ກັບມາມີຊີວິດອີກ (1 ກຣທ 15:18)



ໂດຍປາສະຈາກການຟື້ນພຣະຊົນ, ພຣະເຢຊູກໍຄົງເປັນພຽງແຕ່ມະນຸດທີ່ຊອບທຳຄົນໜຶ່ງເທົ່ານັ້ນ ທີ່ຖືກຂ້າຕາຍໂດຍບໍ່ມີເຫດຜົນ, ແຕ່ບໍ່ສາມາດຊ່ວຍຄົນອື່ນໄດ້. “ແຕ່ວ່າຕອນນີ້ພຣະເຢຊູຊົງຟື້ນຄືນຈາກຄວາມຕາຍ” (1 ກຣທ 15:20a) . ພວກເຮົາຈຶ່ງມີພຣະຜູ້ຊ່ວຍໃຫ້ລອດທີ່ດຳຣົງຢູ່.

ດ້ວຍເຫດນີ້, ຂ່າວປະເສີດຈຶ່ງມີຄວາມໝາຍ; ຄວາມເຊື່ອຂອງພວກເຮົາກໍ່ເຊັ່ນກັນ; ພວກເຮົາເປັນພະຍານທີ່ຊື່ສັດ; ຄວາມບາບຂອງພວກເຮົາໄດ້ຮັບການອະໄພແລ້ວ; ແລະຜູ້ທີ່ຕາຍໃນພຣະຄຣິດຈະໄດ້ມີຊີວິດອີກຄັ້ງ.



# ແມ່ນຫຍັງທີ່ຢັ້ງຢືນວ່າມີການຟື້ນຄືນມາ?

"ແຕ່ທີ່ຈິງ ພຣະຄຣິດໄດ້ຊົງຖືກບັນດານໃຫ້ຄືນພຣະຊົນແລ້ວ ແລະຊົງເປັນຜົນແລກໃນພວກຄົນທີ່ລ່ວງລັບໄປແລ້ວນັ້ນ."
1 ໂກຣິນໂທ 15:20



ສິ່ງທີ່ຮັບປະກັນປະການທຳອິດຈາກການຟື້ນຄືນພຣະຊົນຂອງພຣະຄຣິດແມ່ນ: ການທີ່ພວກເຮົາຍອມຮັບແຜນການແຫ່ງຄວາມລອດ (ເພາະຖ້າບໍ່ຍອມຮັບ ກໍເທົ່າກັບບໍ່ເຊື່ອ)– ຈາກອາດາມ ຈົນເຖິງວັນສິ້ນໂລກ– ຖ້າວ່າພວກເຮົາຕາຍ, ພວກເຮົາຈະມີຊີວິດອີກຄັ້ງ (1 ກຣທ 15:20-23).



ແມ່ນຫຍັງຈະເກີດຂຶ້ນຫລັງຈາກທີ່ພວກເຮົາຟື້ນຄືນມາ? ໂດຍການເອົາຊະນະຄວາມຕາຍ, ພຣະເຢຊູຊົງພິດຊິດຊະນະທຸກສັດຕູ (1 ກຣທ 15:25-26). ຫລັງຈາກນັ້ນ, ພຣະເຢຊູຈະຊົງມອບທຸກສິ່ງໄວ້ໃນພຣະຫັດຂອງພຣະບິດາ "ເພື່ອພຣະເຈົ້າຈະເປັນທຸກສິ່ງໃນທຸກສິ່ງ" (1 ກຣທ 15:24, 28).

ເພີ່ມເຕີມໃນການຮັບປະກັນນີ້, ອຈ ໂປໂລ ໃຫ້ສອງຢ່າງສຳລັບການຮັບປະກັນ ເຊິ່ງມັນກະທົບຕໍ່ການໃຊ້ຊີວິດຂອງພວກເຮົາ:



1 Corinthians 15:30-32

ມັນແມ່ນຄຸ້ມຄ່າກັບການປະກາດຂ່າວປະເສີດ, ເຖິງວ່າໃນຂ່າວປະເສີດນັ້ນຈະມີການທົນທຸກ ຫລືອັນຕະລາຍກໍ່ຕາມ.



1 Corinthians 15:33-34

ມັນແມ່ນຄຸ້ມຄ່າທີ່ຈະດຳເນີນຊີວິດໃຫ້ສອດຄ່ອງກັບຫລັກຄຳສອນຂອງພຣະຄຳພີ

# ການພື້ນຄືນຊີບຂອງພວກເຮົາ



# ພວກເຮົາຈະຟື້ນຄືນມາພ້ອມກັບຮ່າງກາຍແບບໃດ

"ເມື່ອຄົນຕາຍເປັນຄືນມາສູ່ຊີວິດກໍຈະເປັນດັ່ງນັ້ນແຫລະ, ເມື່ອຮ່າງກາຍໄດ້ຖືກຫວ່ານລົງ ກໍເປື່ອຍເນົ່າໄປ ເມື່ອເປັນຄືນມາ ຮ່າງກາຍນັ້ນ ກໍບໍ່ເປື່ອຍເນົ່າອີກ." 1 ໂກຣິນໂທ 15:42

## ຮູບພາບທີ່ກ່ຽວກັບການຟື້ນຄືນຊີບ:

### ຮ່າງກາຍຂອງພືດ (1 ກຣທ 15:35-38)

- ເມັດພືດຖືກຫວ່ານ



- ຖືກເກັບກ່ຽວ



- ພຣະອົງປະທານຮ່າງກາຍໃຫ້ຕາມແຕ່ລະຕົ້ນທີ່ພຣະອົງປະສົງ



### ຮ່າງກາຍທາງກາຍະພາບ (1 ກຣທ 15:39)

- ຮ່າງກາຍຂອງມະນຸດ



- ຮ່າງກາຍຂອງສັດ



- ຮ່າງກາຍຂອງປາ



- ຮ່າງກາຍຂອງນົກ



### ຮ່າງກາຍທາງສະຫວັນ (1 ກຣທ 15:40-41)

- ແສງຂອງດວງຕາເວັນ



- ແສງຂອງດວງຈັນ



- ແສງຂອງດວງດາວ



- ລັດສະໝີຂອງແຕ່ລະດວງ



# ພວກເຮົາຈະຟື້ນຄືນມາພ້ອມກັບຮ່າງກາຍແບບໃດ

"ເມື່ອຄົນຕາຍເປັນຄືນມາສູ່ຊີວິດກໍຈະເປັນດັ່ງນັ້ນແຫລະ, ເມື່ອຮ່າງກາຍໄດ້ຖືກຫວ່ານລົງ ກໍເປື່ອຍເນົ່າໄປ ເມື່ອເປັນຄືນມາ ຮ່າງກາຍນັ້ນ ກໍບໍ່ເປື່ອຍເນົ່າອີກ." 1 ໂກຣິນໂທ 15:42

ແມ່ນຫຍັງແມ່ຄວາມແຕກຕ່າງລະຫວ່າງຮ່າງກາຍປະຈຸບັນ ແລະ ຮ່າງກາຍທີ່ຖືກປ່ຽນແປງ? (1 ກຣທ 15:42-44)

| ຮ່າງກາຍປະຈຸບັນ | ຮ່າງກາຍທີ່ຟື້ນຄືນມາ |
|---|---|
| ສາມາດເນົ່າເປື່ອຍໄດ້ | ບໍ່ສາມາດເນົ່າເປື່ອຍໄດ້ |
| ໄຮ້ກຽດ | ສະຫງ່າງາມ |
| ອ່ອນແອ | ຊົງພະລັງ |
| ເນື້ອໜັງ | ຈິດວິນຍານ |







ອາດາມມີຮ່າງກາຍເທິງໂລກ, ອາດາມຄົນທີສອງ [ພຣະເຢຊູ] ມີຮ່າງກາຍຈາກສະຫວັນ. ໃນການຟື້ນຄືນພຣະຊົນ, ຮ່າງກາຍຂອງພວກເຮົາຈະຖືກປ່ຽນແປງຄືກັນກັບຮ່າງກາຍຂອງພຣະຄຣິດ, ນັ້ນແມ່ນເປັນຮ່າງກາຍທີ່ບໍ່ເນົ່າເປື່ອຍ, ມີສະຫງ່າຣາສີ, ຊົງພະລັງ, ມີຈິດວິນຍານ, ຕາມແບບສະຫວັນ (1 ກຣທ 15:45-49).

# ແລ້ວຕອນໃດທີ່ພວກເຮົາຈະໄດ້ຮັບຮ່າງກາຍນັ້ນ?

“ນີ້ແຫຼະ ເຮົາມີຂໍ້ລັບເລິກບອກພວກເຈົ້າວ່າ, ເຮົາທັງຫລາຍຈະບໍ່ລ່ວງລັບໄປໝົດທຸກຄົນ, ແຕ່ເຮົາທັງຫລາຍຈະຖືກປ່ຽນແປງໃໝ່ໝົດທຸກຄົນ,” 1 ໂກຣິນໂທ 15:51



ກ່ອນທີ່ຈະກຳນົດເວລາແຫ່ງການຟື້ນຄືນຊີບ ແລະ ສິ່ງທີ່ຈະເກີດຂຶ້ນກັບຮ່າງກາຍຂອງພວກເຮົາ, ອຈ ໂປໂລ ກ່າວວ່າ “ສິ່ງທີ່ເປັນເນື້ອໜັງ ແລະ ເລືອດ ຈະມີສ່ວນໃນອານາຈັກຂອງພຣະເຈົ້າບໍ່ໄດ້ ” (1 ກຣທ 15:50). ແລ້ວໝາຍຄວາມວ່າ ຫລັງຈາກນີ້ພວກເຮົາຈະບໍ່ມີຮ່າງກາຍ ຫລັງຈາກຟື້ນຄືນຊີບບໍ?

ຄຳວ່າ “ເນື້ອໜັງ ແລະ ເລືອດ” ມັກໃຊ້ເປັນຄຳພ້ອງຄວາມໝາຍ ຂອງຄຳວ່າ “ບຸກຄົນ” (ມທ 16:17; ຄລຕ 1:16; ອຟຊ 6:12; ຮຣ 2:14). ອຈ ໂປໂລ ກຳລັງປຽບທຽບໃນບ່ອນນີ້ວ່າ: ຜູ້ອາໄສຢູ່ໃນໂລກ = ເນົ່າເປື່ອຍ; ຜູ້ອາໄສຢູ່ໃນສະຫວັນ= ຮ່າງກາຍບໍ່ເນົ່າເປື່ອຍໄດ້. ໃນໂລກເຮົາມີຮ່າງກາຍທີ່ເຊື່ອມສະຫລາຍເປັນດິນ, ເພາະສະນັ້ນພວກເຮົາບໍ່ສາມາດນຳຮ່າງກາຍນີ້ໄປສະຫວັນໄດ້.



ໃນການສະເດັດກັບມາຄັ້ງທີສອງຂອງພຣະຄຣິດ, ຮ່າງກາຍທີ່ເຊື່ອມສະຫລາຍໄດ້ ຈະຖືກປ່ຽນເປັນຮ່າງກາຍທີ່ບໍ່ຖືກເຊື່ອມສະຫລາຍໄດ້, ດັ່ງທີ່ຮ່າງກາຍຂອງພຣະຄຣິດ (1 ກຣທ 15:51-55; ລກ 24:36-40).

ສຳລັບຜູ້ທີ່ຫລັບໄຫລໃນຫລຸມຝັງສົບ ຄືກັບພຣະຄຣິດ, ພວກເຂົາຈະຮູ້ສຶກວ່າເວລາຜ່ານໄປພຽງແປັບດຽວ. ພວກເຂົາຮູ້ສຶກເຖິງຄວາມໜາວເຫັນບແຫ່ງຄວາມຕາຍ ແຕ່ຕອນນີ້ກຳລັງເຫັນພຣະຄຣິດຕໍ່ໜ້າພວກເຂົາ (1 ກຣທ15:52).





EGW (The Faith I Live By, June 23)

“ການຄືນມາຈາກຕາຍຂອງພຣະເຢຊູເປັນຕົວຢ່າງຂອງການຄືນມາຈາກຕາຍຄັ້ງສຸດທ້າຍຂອງທຸກຄົນທີ່ນອນຫຼັບຢູ່ໃນພຣະອົງ. ຮ່າງກາຍທີ່ຟື້ນຄືນມາຈາກຕາຍຂອງພຣະຜູ້ໄຖ່, ກິລິຍາມາລະຍາດຂອງພຣະອົງ, ນໍ້າສຽງການເວົ້າຂອງພຣະອົງ, ລ້ວນແຕ່ເປັນສິ່ງທີ່ຜູ້ຕິດຕາມຂອງພຣະອົງຄຸ້ນເຄີຍ. ໃນທໍານອງດຽວກັນ, ຜູ້ທີ່ນອນຫຼັບຢູ່ໃນພຣະເຢຊູກໍຈະຄືນມາຈາກຕາຍອີກຄັ້ງ. ພວກເຮົາຈະຮູ້ຈັກມິດສະຫາຍຂອງພວກເຮົາເໝືອນດັ່ງທີ່ບັນດາສາວົກໄດ້ຮູ້ຈັກພຣະເຢຊູ. ເຖິງແມ່ນວ່າພວກເຂົາອາດຈະເຄີຍພິການ, ເຈັບໄຂ້ໄດ້ປ່ວຍ, ຫຼື ເສຍໂສມໃນຊີວິດທີ່ຕ້ອງຕາຍນີ້, ແຕ່ໃນຮ່າງກາຍທີ່ຟື້ນຄືນມາຈາກຕາຍ ແລະ ມີຮູບໂສມອັນຊົງກຽດຂອງພວກເຂົາ, ຕົວຕົນຂອງແຕ່ລະຄົນຈະຖືກປົກປ້ອງໄວ້ຢ່າງສົມບູນແບບ, ແລະ ພວກເຮົາຈະຈໍາໄດ້, ໃນໃບໜ້າທີ່ເປັ່ງປະກາຍດ້ວຍແສງສະຫວ່າງທີ່ສ່ອງອອກມາຈາກໃບໜ້າຂອງພຣະເຢຊູ, ເຊິ່ງເຄືອດເຄົ້າຮູບຮ່າງຂອງຜູ້ທີ່ພວກເຮົາຮັກ.”